ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 15:
## The Story of Nangtangon

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 6:** ໜັງສືເລື່ອງ: "ນາງແຕງອ່ອນ" ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ສະເໜີເລື່ອງ "ນາງແຕງອ່ອນ" | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ຄວາມເປັນມາຂອງເລື່ອງ "ນາງແຕງອ່ອນ" | **ຄຳຖາມຫຼັກ (Questions):**<br>1) ໜັງສືເລື່ອງນາງແຕງອ່ອນ ມີຄວາມເປັນມາ ແລະເນື້ອໃນຈັກຂັ້ນ? ແຕ່ລະຂັ້ນເປັນແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມເປັນມາ ແລະ ເນື້ອໃນແຕ່ລະຂັ້ນຂອງເລື່ອງນາງແຕງອ່ອນ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງຄວາມເປັນມາ ແລະ ເນື້ອໃນແຕ່ລະຂັ້ນຂອງເລື່ອງນາງແຕງອ່ອນ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງເກດກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| - **ສື່ການສອນມີ:**<br>ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມໜັງສືເລື່ອງ ນາງແຕງອ່ອນ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.<br>- **ກິດຈະກຳການຮຽນ**<br>**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**<br>- **ທວນຄືນບົດຮຽນເກົ່າ** | |

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອສິລະປະການປະດິດແຕ່ງເລື່ອງ "ທ້າວຈັນທະຄາດ" ໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 6**

**ໜັງສືເລື່ອງ: "ນາງແຕງອ່ອນ"**

**6.1 ສະເໜີເລື່ອງ "ນາງແຕງອ່ອນ"** (60 ນາທີ)

<u>**ກິດຈະກາ 1:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ໜັງສືເລື່ອງນາງແຕງອ່ອນ ມີຄວາມເປັນມາ ແລະເນື້ອໃນຈັກບັ້ນ? ແຕ່ລະບັ້ນເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (55 ນາທີ)

ໜັງສືເລື່ອງ ນາງແຕງອ່ອນ ເປັນບົດວັນນະຄະດີທີ່ເກົ່າແກ່ຂອງລາວອີກສະບັບໜຶ່ງທີ່ປະດິດແຕ່ງຂຶ້ນໃນສະ ໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງ, ໂດຍແມ່ນນັກປາດອາຈານທີ່ມີຄວາມຮູ້ເປັນຜູ້ປະດິດແຕ່ງຂຶ້ນ, ບໍ່ສາມາດຮູ້ໄດ້ເຖິງວັນ, ເດືອນ, ປີ ແລະ ຊື່ຜູ້ແຕ່ງຄືກັນກັບເລື່ອງອື່ນໆໃນສະໄໝດຽວກັນ. ເປັນບົດເລື່ອງທີ່ເວົ້າເຖິງສັງຄົມສະໄໝສັກດີນາລາວທີ່ມີການແບ່ງແຍກຊົນຊັ້ນ, ອິດສາບັງບຽດ, ແຂ່ງດີແຂ່ງເດັ່ນເຊິ່ງກັນ ແລະ ກັນ. ຜູ້ທຸກຈົນຖືກຊົນຊັ້ນຜູ້ຮັ່ງມີເອົາລັດເອົາປຽບ, ພວກເຂົາເຫັນແກ່ອຳນາດ ແລະ ເງິນຄຳສຳຄັນກວ່າຊີວິດຂອງມະນຸດ, ແຕ່ທັງໝົດເຫຼົ່ານັ້ນກໍສູ້ຄວາມເປັນທຳບໍ່ໄດ້, ເມື່ອຄວາມຈິງຖືກເປີດເຜີຍຜູ້ກະທຳກໍຕ້ອງຍອມກົ້ມຫົວຮັບເອົາ, ນັກແຕ່ງໄດ້ກຳນົດເນື້ອໃນຕາມຫຼັກສາສະໜາທີ່ວ່າ: "ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ". ຈາກໜັງສືເລື່ອງນີ້, ຈະເຮັດໃຫ້ຜູ້ອ່ານຮູ້ໄດ້ເຖິງສັງຄົມສັກດີນາໃນສະໄໝກ່ອນ. ເປັນໜັງສືເລື່ອງທີ່ສົມຄວນໄດ້ຮັບການສຶກສາ. ໜັງສືສະບັບນີ້ຜູ້ແຕ່ງໄດ້ຂຽນເປັນຄຳກອນ, ຕໍ່ມາຮອດປີ 1991 ນັກປະພັນ ພໍ ພວງສະບາໄດ້ຖອດເປັນຄຳຮ້ອຍແກ້ວ, ແບ່ງເປັນ 24 ບັ້ນ. ອີງຕາມ ກົມວັນນະຄະດີ (1967), ຕົ້ນສະບັບເດີມແທ້ມີສອງເຫຼັ້ມ ແລະ ມີ 734 ວັກຄາກອນ, ແບ່ງເປັນ 27 ບັ້ນດັ່ງນີ້:

**1) ບັ້ນກ່າວເຖິງເມືອງໂກສິນະຄອນ**

ເປັນເມືອງທີ່ອຸດົມສົມບູນ ມີວຽງວັງທີ່ສວຍສົດງົດງາມ, ມີນາງສະໜົມ, ມີງົວຄວາຍຊ້າງມ້າ ມີພະຍາປົກຄອງເມືອງຊື່: ພະຍາໂກສີ, ມີມະເຫສີຊື່ ສີສຸພະລັດຕະນາດ, ມີລູກຊາຍຊື່ວ່າ: ມະຫາວົງ (ຈັກກີມະຫາວົງ). ພະຍາໄດ້ປົກຄອງບ້ານເມືອງເປັນຢ່າງດີ, ປະຊາຊົນລາຊະດອນມີຄວາມຢູ່ເຢັນເປັນສຸກ.

**2) ບັ້ນມະຫາວົງໄປຕໍ່ໄກ່**

ອາຍຸໄດ້ 16 ປີ ທ້າວມີພອນສະຫວັນຄ້ອງຊ້າງ, ຕໍ່ໄກ່. ກຽມເຄື່ອງເດີນທາງເພື່ອໄປຕໍ່ໄກ່, ເດີນທາງໄປຕໍ່ໄກ່ຜ່ານພູຜາປ່າໄມ້ຈາກປ່ານີ້ຕໍ່ໃສ່ປ່າໃນເລື້ອຍໆຈົນຫຼົງທາງ. ໄປຮອດແຄມແມ່ນ້ຳເລີຍພາກັນນອນພັກເຊົາຢູ່ທີ່ນັ້ນ. (ມີເສນາອາມາດ 4 ຄົນຊັ້ນຈຳໄປນຳ).

- ເທວະດາໄດ້ບັນດົນໃຫ້ທ້າວໄປພົບຍິງຄົນໜຶ່ງ ເຊິ່ງມີດວງອາດສະໜາໃຫ້ເປັນເມຍໃນອະນາຄົດ, ທ້າງຊັດເຊພະເນຈອນເລີຍໄປພົບແມ່ນໍ້າແຫ່ງໜຶ່ງເຊິ່ງມີແຂ້, ງູ ອາໄສຢູ່.

**3) ບັ້ນເສນາອາມາດນໍາຫາມະຫາວັງ**

ເສນາອາມາດທັງ 4 ເມືອນໍາຫາບໍ່ເຫັນ ຈຶ່ງພາກັນຊອກຕາມພູຕ່າງໆກໍບໍ່ເຫັນເລີຍໄປບອກພະຍາ. ພະຍາຈຶ່ງໄປໃຫ້ໝໍໂຫນດູລອງເບິ່ງ, ໝໍໂຫນຄາດວ່າອີກ 3 ເດືອນຍັງບໍ່ເຫັນແມ່ນຍັງດົນຈຶ່ງຈະເຫັນ.

**4) ບັ້ນມະຫາວັງຝັນເຫັນນາງແຕງອ່ອນ**

ເສນາອາມາດທັງ 4 ນໍາໄປຮອດແຄມນໍ້າ. ທ້າວໄດ້ຝັນເຫັນນາງ ແຕງອ່ອນຢູ່ພື້ນນໍ້າ, ຕື່ນຂຶ້ນມາໄປຕໍ່ໄກ່ອີກ, ທ້າວໂສກເສົ້າຍ້ອນຝັນເຫັນສາວງາມ. ເສນາອາມາດທັງ 4 ບໍ່ເຊື່ອໃນຄວາມຝັນແຕ່ທ້າວບໍ່ເລີກບໍ່ແລ້ວຢາກໃຫ້ຄົນດໍາພື້ນບາດານລອງເບິ່ງ.

ຈາກນັ້ນດໍາໄປເບິ່ງພື້ນບາດານເລີຍເຫັນຝູງແຂ້ ແລະ ມີຄົນ 3 ຄົນຄື: ນາງ ແຕງອ່ອນ, ພໍ່, ແມ່ເຫຼືອນັ້ນເປັນແຂ້ໝົດ. ເມື່ອເຫັນແນວນັ້ນ ຈຶ່ງມາລາຍງານທ້າວ ແລະ ທ້າວກໍດີໃຈຫຼາຍເມື່ອຄວາມຝັນເປັນຈິງ. ທ້າວກໍກັບເມືອເມືອງດ້ວຍຄວາມມ່ວນຊື່ນ, ບອກໃຫ້ພໍ່ໄປຂໍສາວ ແຕ່ພໍ່ບໍ່ເຫັນດີເພາະເປັນເຊື້ອແຂ້, ພໍ່ໄດ້ໝັ້ນລູກສາວສ່ຽວໃຫ້ທ້າວແຕ່ທ້າວກໍບໍ່ເອົາ, ຊິເອົານາງມາໃຫ້ເລືອກ 300 ຄົນທ້າວກໍບໍ່ເອົາ, ຊິເອົາແຕ່ນາງໃນຝັນພຽງຜູ້ດຽວ, ພໍ່ໄດ້ເອົາໝໍດູມາເບິ່ງວ່ານາງເປັນຄືແນວໃດ? ສຸດທ້າຍພໍ່ໄດ້ໄປຂໍນາງ ແຕງອ່ອນໃຫ້.

- ພໍ່ນາງແຕງອ່ອນຊື່: ພະຍາກຸມພົນ
- ແມ່ຊື່: ທອງແດງ
- ອ້າຍຂອງນາງແຕງອ່ອນຊື່: ກຸມພາ (ເປັນແຂ້)
- ນ້ອງຊາຍຊື່: ກຸມພີ (ກໍລະກັນ ເປັນແຂ້)

**5) ບັ້ນຂຸນຄານນໍານາງແຕງອ່ອນອອກຈາກນໍ້າ**

ເມື່ອຂຶ້ນຝັ່ງແລ້ວແຕ່ຝັ່ງມາຫາເມືອງໃຊ້ເວລາເດີນທາງ 4 ເດືອນ ທາງທິດຕາເວັນຕົກ, ຂີ່ຊ້າງແກ້ວແຫ່ນາງມາເມືອງ.

- ຂະບວນແຫ່ໃກ້ຊິຮອດເມືອງແລ້ວເສນາຈັດແຈງໃຫ້ຂຸດທາງໃຫ້ພຽງ, ຄົບງັນ 2 ຄືນຮັບໃພ້, ປຸກທໍຜາ ສາດໃຫ້ນາງຢູ່.

- ທ້າວໄດ້ຈັດແຈງເອົາແຫວນທໍາມະໂລງໃສ່ມືໃຫ້ນາງ ແລະ ໄດ້ລົກຮັກຕໍ່ນາງຈະເອົານາງເປັນເມຍ. ນາງແຕງອ່ອນເປັນຄົນຖະໜອມຖ່ອມຕົວ.

**6) ບັ້ນແມ່ໄອຍະກາຖວາຍນາງທັງຫ້າ**

ແມ່ໄອຍາກາມີລູກສາວຫ້າຄົນຜົວຕາຍປະລ້ຽງລູກບໍ່ຫຼູ້ອນຈຶ່ງຄິດເອົາລູກໄປໃຫ້ທ້າວເພື່ອຮັບໃຊ້ພະອົງ. ແມ່ໄດ້ຊວນເອົາລູກສາວເຂົ້າໄປໃນວັງ ລູກສາວທັງຫ້າງາມສະເໝີກັນ, ແມ່ໄອຍາກາໄດ້ຖາມທ້າວເພື່ອຢາກໃຫ້ລູກສາວໄດ້ຮັບໃຊ້, ທ້າວໄດ້ຖາມພໍ່ແມ່ ແຕ່ພໍ່ແມ່ໃຫ້ຖາມນາງ ແຕງອ່ອນ. ນາງ ແຕງອ່ອນກໍຕາມໃຈຜົວ. ທ້າວໄດ້ຝັນແປກຝັນວ່າ

ຍອດຊໍ່ຟ້າຫັກມຸ່ນລົງມາຈົນດິນຈຶ່ງມີແສງສີຮຸ່ງເຮືອງຄືນມາ (ຝັນກ່ອນນາງທັງຫ້າຈະມາຢູ່ນຳ). ຈາກນັ້ນກໍ່ຍິນດີຮັບເອົານາງທັງຫ້າມາຢູ່ນຳ.

**7) ພະຍາໂກສີພ້ອມດ້ວຍເມຍສິ້ນພະຊົນ**

ພໍ່ແມ່ໄດ້ຕາຍຈາກທ້າວກໍໄດ້ກິນທານຫາຕາມຮີດຄອງປະເພນີ, ຈາກນັ້ນ ທ້າວກໍໄດ້ເປັນພະຍາສືບຕໍ່ປົກຄອງເມືອງ.

**8) ບັ້ນພະຍາຈັກກີມະຫາວົງໄປຄ້ອງຊ້າງ**

ເມຍຖືພາຄອງ 9 ເດືອນຈະຄອດ. ເວົ້າເຖິງນາຍພານ ທຸສະໂກ (ເກົ່າ) ມີອາຊີບຫາກິນລ່າເນື້ອຈົນມີຢູ່ມີກິນ. ມື້ໜຶ່ງໄດ້ໄປເຫັນໝູ່ຊ້າງໃນນັ້ນມີຊ້າງເຜືອກງາມົນໂຕໜຶ່ງຄິດຈະຍິງ ແຕ່ຢ້ານເປັນໂທດເລີຍມາບອກພະຍາໄປຄ້ອງເອົາເພື່ອຈະໄດ້ຂອງຂວັນຈາກພະຍາ. ພໍຕື່ນມາໄດ້ໄປລາຍງານຕໍ່ພະຍາ, ມື້ຕໍ່ມາພະອົງກໍໄປຄ້ອງຊ້າງ ແລະ ກ່ອນຈະໄປກໍໄດ້ສັ່ງລາເມຍຢ່າງຄັກແນ່, ພະອົງໄປຄ້ອງຊ້າງ ແລະ ພະອົງກໍໄດ້ພົບຊ້າງເຜືອກແທ້.

**9) ນາງແຕງອ່ອນປະສູດລູກ**

ແມ່ໄອຍາກາໄດ້ດີໃຈຍ້ອນຄວາມຊົ່ວຕັ້ງໄວ້ຫວັງກອບໂກຍ, ລາວໄດ້ຊື້ຈ້າງເສນາອາມາດໃຫຍ່-ນ້ອຍ ແລະ ຈ້າງນັກດຳນຳເອົາແຂ້ນ້ອຍມາປ່ຽນລູກຂອງນາງແຕງອ່ອນ. ໃນເວລາປະສູດແມ່ໄອຍາກາໄດ້ເອົາຜ້າມັດຕານາງໄວ້ໂດຍອ້າງວ່າເປັນລູກຫົວສາວ, ຢ້ານນາງແຕງອ່ອນຈະເປັນອົນເມື່ອເຫັນເລືອດຕົກຢາງອອກ, ສວຍໂອກາດນັ້ນແລ້ວຫາເລື່ອງໃສ່ນາງແຕງອ່ອນວ່າໄປຫຼິ້ນແຄມນ້ຳ (ຫຼິ້ນແຂ້), ເມື່ອມະຫາວົງມາຮອດກໍເອົາແຂ້ມາໃຫ້ເບິ່ງພ້ອມທັງສັບສໍ່ຕ່າງໆນາໆ

**10) ບັ້ນນາງ ເທບລິລາ ມາເອົາທ້າວເກດສຸລິຍົງຍານອອກຈາກຂຸມ (ລູກນາງແຕງອ່ອນ)**

ນາງ ເທບລິລາ ໄດ້ເຫັນລູກນາງ ແຕງອ່ອນຈຶ່ງຂຸດເອົາໄປລ້ຽງດ້ວຍການເນລະມິດເອົາລ້ຽງຕັ້ງແຕ່ນ້ອຍຈົນໃຫຍ່ ແລະ ສອນວິຊາອາຄົມໃຫ້ແລ້ວໃສ່ຊື່ວ່າ: "ເກດສຸລິຍົງຍານ" ແຕ່ລະມື້ທ້າວໄດ້ຫຼິ້ນນຳຜີເປັນໝູ່.

**11) ບັ້ນທ້າວມະຫາວົງກັບມາເມືອງ**

ເມື່ອພະອົງກັບມາແຕ່ຄ້ອງຊ້າງ ແມ່ໄອຍາກາກໍໄດ້ເອົາແຂ້ໄປຖວາຍພ້ອມທັງໃສ່ຄວາມນາງແຕງອ່ອນວ່າຫຼິ້ນຊູ້, ແຕ່ພະອົງກໍບໍ່ເຊື່ອຄິດວ່ານາງເປັນເຊື້ອຊາດແຂ້. ແຕ່ເສນາອາມາດທັງແສນເມືອງກໍຫາເລື່ອງວ່ານາງອອດອ້າງແຕ່ກາຍ ແລະ ອື່ນໆ.

**12) ບັ້ນແມ່ໄອຍາກາສັບສໍ່ວ່ານາງ ແຕງອ່ອນ ຫຼິ້ນຊູ້**

ພະອົງໄດ້ຖາມເຖິງຄວາມສຸກ, ທຸກຂອງນາງແຕງອ່ອນຕອນທີ່ຜົວບໍ່ຢູ່ ແລະ ນາງກໍໄດ້ຕອບຜົວຕາມຄວາມຈິງນາງໄດ້ປະຕິເສດຄວາມຜິດທີ່ແມ່ຍາໄອຍາກາເວົ້າ ແຕ່ແມ່ໄອຍາກາກໍໄດ້ຕໍ່ສູ້ຄືນທັງສອງຫົກຖຽງກັນ ແຕງອ່ອນບໍ່ແພ້ສຸດທ້າຍນາງກໍຖືກຜົວເຕະຕີພ້ອມທັງຂັບໄລ່ໃຫ້ອອກຈາກເມືອງ, ນາງໄດ້ອ້ອນວອນທຸກຢ່າງແຕ່ຜົວກໍບໍ່ຟັງ. ພວກເສນາທີ່ໄປຂໍເອົານາງມານັ້ນໄດ້ຂໍແຮ່ເອົານາງໄປສົ່ງຄືນ ແຕ່ພະຍາກໍບໍ່ຍອມໃຫ້ນາງກັບ, ສຸດທ້າຍກໍປ່ອຍໃຫ້ນາງໄປ

ຕາມຄວາມລະກຳລໍ້າບາກ, ຊ້າງເຜືອກຄູ່ເມືອງໄຫ້ນຳນາງແຕງອ່ອນຢາກໄປນຳນາງແຕ່ຖືກມັດໄວ້, ນາງແຕງອ່ອນໄດ້ສ້າງຄວາມດີຄວາມງາມໃຫ້ແກ່ຊາວເມືອງ ແຕ່ແລ້ວກໍຈາກຊາວບ້ານຊາວເມືອງໄປ.

**13) ບັ້ນນາງແຕງອ່ອນເດີນທາງດ້ວຍຄວາມທຸກ**

ນາງ ແຕງອ່ອນກໍໄດ້ເຂົ້າປ່າຊ້າງດົງເສືອ, ຂຶ້ນພູລົງຫ້ວຍດ້ວຍຄວາມລະກຳລໍ້າບາກ ແລະ ແສນທໍລະມານນາງໄດ້ເດີນໄປຕາມປ່າດົງກົງກົດຜູ້ດຽວຢ່າງບໍ່ມີຈຸດໝາຍ.

**14) ບັ້ນເທວະດາເນລະມິດສວນທິບຕ້ອນຮັບນາງແຕງອ່ອນ**

ເທວະດາໄດ້ເນລະມິດເຂົ້າ, ສາລີປ່າພ້ອມດ້ວຍໝາກໄມ້ຕ່າງໆງນາງມີທຸກຢ່າງ, ນາງເອົາໝາກໄມ້ນັ້ນແລ້ວເດີນທາງຕໍ່ຈົນໄປຮອດເຂດກັນດານເທວະດາໄດ້ເນລະມິດເຄືອເຂົາໄຕ່ໄປຄືຂັ້ນໄດ, ນາງໄດ້ໄປຕົກໃສ່ແມ່ນໍ້າໃຫຍ່ຈົນເຖິງເຂດຂອງກຸມພິນ (ພໍ່) ນາງໄດ້ເອີ້ນຫາອ້າຍດ້ວຍສຽງຮ້ອງໄຫ້ ອ້າຍໄດ້ຂຶ້ນມາເບິ່ງນາງ ແຕງອ່ອນ ແລະ ນາງກໍໄດ້ເລົ່າເຖິງຄວາມທຸກຜ່ານມາສູ່ອ້າຍຟັງ. ອ້າຍແຄ້ນຈຶ່ງພານ້ອງໄປຮຽນວິຊາອາຄົມນຳລືສີ, ກ່ອນຈະໄປຮຽນວິຊາອາຄົມໄດ້ສັ່ງນ້ອງຊື່ກໍລະກັນ (ເປັນແຂ້) ໃຫ້ໄປກິນຄົນຢູ່ເມືອງໂກສີໃຫ້ໝົດ.

**15) ກໍລະກັນນຳລີພິນໄປທຳລາຍເມືອງໂກສິນ**

ເມືອງໂກສິນ ເມື່ອນາງ ແຕງອ່ອນ ບໍ່ຢູ່ແລ້ວ ເມືອງກໍມີແຕ່ເສິກເສືອມາທຳລາຍຈົນຊາວເມືອງຢູ່ບໍ່ເປັນສຸກຈຶ່ງຫາວິທີແກ້ໄຂໂດຍເອົາຫຼັກມາເຮັດຮົ້ວອັດໄວ້ສຳລັບອາບນໍ້າເພື່ອບໍ່ໃຫ້ແຂ້ເຂົ້າມາໄດ້.

**16) ບັ້ນກຸມພາ ແລະ ນາງແຕງອ່ອນຕາຍຢູ່ກາງດົງ**

ຍ້ອນເດີນທາງໄກນາງແຕງອ່ອນໄດ້ຂີ່ຫຼັງອ້າຍ, ແຕ່ຍ້ອນຄວາມເມື່ອຍກຸມພາກໍຕາຍກາງທາງ ນາງແຕງອ່ອນກໍໄດ້ຮ້ອງໄຫ້ນຳອ້າຍ ແລະ ຕາຍນຳກັນ ສຽງຮ້ອງໄຫ້ຂອງນາງໄດ້ຮອດຫູພະຍາອິນ ແລະ ໄດ້ເຫັນທັງສອງອ້າຍນ້ອງນອນຕາຍກອງກັນຢູ່.

**17) ບັ້ນທ້າວອັດສະໄນ ສົມໂພດ ທ້າວກຸມພາ ແລະ ນາງແຕງອ່ອນ**

ພະຍາອິນ (ອັດສະໄນ) ລົງເອົານໍ້າເຕົ້າແກ້ວທິດໃສ່ສອງອ້າຍນ້ອງຄືນມາ, ອ້າຍຄືນມາເປັນຄົນເປັນລືສີ, ນາງແຕງອ່ອນໄດ້ຄືນມາ ແລະ ເປັນຜູ້ງາມກວ່າເກົ່າ. ກຸມພາໄດ້ເປັນລືສີ, ນາແຕງອ່ອນໄດ້ເປັນແມ່ຊີ. ທ້າວອັດສະໄນໄດ້ໂພດຊຸດເຄື່ອງນຸ່ງໃຫ້ພ້ອມແຕ່ລະມື້ນາງແຕງອ່ອນໄດ້ໄປຊອກຫົວເຜືອກ, ມັນ ແລະ ໝາກໄມ້ມາໃຫ້ອ້າຍກິນ ແລະທ້າວອັດສະໄນຍັງບອກວ່າອີກບໍ່ດົນນາງຈະໄດ້ພົບລູກທີ່ແທ້ຈິງຂອງນາງເມື່ອນາງໄດ້ຍິນແນວນັ້ນກໍສະຫຼົບໄປອີກ ແຕ່ທ້າວອັດສະໄນກໍເອົານໍ້າເຕົ້າແກ້ວທິດຄືນມາອີກ.

**18) ບັ້ນທ້າວເກດສຸລິຍົງຍານເຮັດສົງຄາມກັບພໍ່**

ອາຍຸໄດ້ 17 ປີ ທ້າວກໍມີວິຊາອາຄົມທີ່ເກັ່ງກ້າສາມາດ, ແຕ່ລະມື້ແມ່ນຫຼິ້ນກັບຜີເປັນເພື່ອນ. ມີມື້ໜຶ່ງທ້າວໄດ້ໄປຫຼິ້ນເຂດລ້ຽງມ້າ ແລະ ເຫັນພວກລ້ຽງມ້ານອນເຝົ້າທ້າວຈຶ່ງລັກເອົາມ້າໜີ (ມ້າຂອງພະຍາຜູ້ເປັນພໍ່).

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

**19) ບັ້ນລີງໂຫດໄວຍາກາ ແລະ ແສນເມືອງ**

ເອີ້ນເອົາເສນາອາມາດມາເຕົ້າໂຮມ, ແສນເມືອງຜູ້ໃຫຍ່ໄດ້ໄຂຄວາມລັບວ່າ: ຜູ້ນ້ອຍໄດ້ຜູ້ລະ 1000; ສ່ວນຜູ້ໃຫຍ່ 1500 (ຄ່າຈ້າງ). ພະອີງຈຶ່ງໄດ້ທໍລະມານຄົນໃນເມືອງໃຫ້ອົດເຂົ້າອົດນ້ຳຈົນທ້າວ ເກດສຸລິຍົງຍານມາເອົ້າຊ່ວຍ, ສ່ວນແມ່ໄວຍາກາ ແລະ ນາງທັງຫ້າໃຫ້ເອົາໄປຂັງຄຸກໄວ້.

**20) ບັ້ນຍັກທັດຖະຈັກໄດ້ລູກສາວຢູ່ໃນດອກບົວ**

ຍັກທັດຖະຈັກ ເປັນພະຍາປົກຄອງເມືອງນັນທະພານເມຍຊື່ ສູນທອນ. ມີມື້ໜຶ່ງຍັກໄດ້ຄອບເມຍໄປທ່ຽວ, ພໍໄປຮອດເມືອງພູເງິນ-ພູຄໍາ ກໍມີໜອງບົວຢູ່ເຂດນີ້ໜອງດອກບົວໄດ້ມີດອກຢ່າງຫຼວງຫຼາຍ ແຕ່ມີດອກໜຶ່ງງາມຜິດປົກກະຕິຍັກຈຶ່ງເດັດເອົາມາຕ້ອນເມຍ. ກັບມາຮອດເມືອງຕອນຄໍ່າເມຍໄດ້ເອົາດອກບົວໄປບູຊາຕື່ນເຊົ້າມາມີຄົນອອກມາຈາກດອກບົວຊື່ວ່າ: ນາງປະທຸມມາ, ນາງໄດ້ຖາມວ່າ: ນີ້ແມ່ນຢູ່ໃສ? ຍັກໄດ້ເລົ່າຄວາມຈິງໃຫ້ຟັງ, ສອງຜົວເມຍບໍ່ມີລູກເລີຍເອົານາງເຮັດລູກສາວ.

ຍັກທັດຖະຈັກໄດ້ປຸກຫໍຜາສາດໃຫ້ນາງຢູ່ ພ້ອມທັງສອນດອກໄມ້ຕ່າງໆໃຫ້ນາງ ແຕ່ນາງບໍ່ຢາກຢູ່ ເພາະຍ້ອນຢ້ານຍັກກິນ, ນາງຢາກກັບຄືນໄປຢູ່ໜອງເກົ່າຂອງນາງ. ຍັກທັດຖະຈັກໄດ້ຮັກແພງນາງ ແລະ ເອົານາງເປັນລູກ, ນາງບໍ່ມີໝູ່ຫຼິ້ນສະນັ້ນ ຍັກທັດຖະຈັກຈຶ່ງໄປຊອກຫາໝູ່ທີ່ເມືອງມະນຸດມາເປັນເພື່ອນ. ໄປລັກເອົານາງອິນທອງ ລູກພະຍາຈັກຂິນ, ໄປລັກເອົານາງຍອດຟ້າລູກພະຍາເມືອງຊົມພູ, ແຕ່ນາງກໍບໍ່ມັກຈຶ່ງໄປຕົກໃສ່ເຂດຂອງນາງແຕງອ່ອນເລີຍຢາກໄດ້ເປັນເມຍຈຶ່ງຫຼັກອູ້ມເອົາມາ.

**21) ລີສີກຸມພາຫ້ອງໄຫ້ນຳນ້ອງສາວ**

ເມື່ອແຕງອ່ອນຖືກຍັກທັດຖະຈັກລັກເອົາໄປ ລີສີກຸມພາຜູ້ເປັນອ້າຍກໍໄດ້ນຳຊອກຫານ້ອງສາວຈົນທົ່ວປ່າດົງແຕ່ກໍບໍ່ເຫັນ ສຸດທ້າຍກໍໄດ້ບຳເພັນພະວັນນາໃຫ້ນ້ອງໄດ້ກັບຄືນມາ.

**22) ພະຍາອິນບອກທ້າວ ເກດສຸລິຍົງຍານໄປນຳເອົາແມ່**

ພະຍາອິນໄດ້ບອກທາງໃຫ້ທ້າວໄປນຳເອົາແມ່ຢູ່ທີ່ເມືອງຂອງຍັກທັດຖະຈັກ ຊື່ວ່າ: ເມືອງນັນທະພານ.

**23) ບັ້ນທ້າວ ເກດສຸລິຍົງຍານໄປນຳເອົາແມ່**

ການເດີນທາງໄປນຳຫາແມ່ ທ້າວໄດ້ຄອບແມ່ລ້ຽງນາງເທບລີລາ, ນາງໄດ້ມອບແຫວນມໍລະກົດວົງໜຶ່ງ, ຜ້າວິເສດໜຶ່ງຜືນໄວ້ກັນສັດຕູ, ມີມ້າມະນີກາບ, ຜີເຊື້ອບ້ານ ແລະ ເຄື່ອງກິນຕ່າງໆ. ເດີນທາງໄດ້ໜຶ່ງເດືອນກໍໄປພົບຕູບນ້ອຍຢູ່ແຄມປ່າ ທ້າວກໍຢຸດເຊົາຢູ່ຕູບເລີຍເຫັນລຸງຂອງຕົນ (ລີສີກຸມພາ) ກໍເລົ່າເລື່ອງຕ່າງໆສູ່ລຸງຟັງ. ຈາກນັ້ນ, ກໍໄດ້ເດີນທາງຕໍ່ໄປໄດ້ໜຶ່ງເດືອນກໍໄປຮອດແມ່ນ້ຳສາລະວັນ.

**24) ຍັກສາລະວັນພາທ້າວສູ້ຮົບກັບຍັກທັດຖະຈັກ**

ຕີກັບຍັກຄິດສະລຶງນ້ອງຊາຍຂອງຍັກທັດຖະຈັກຢູ່ນອກເມືອງ, ຕີກັບຍັກພິງເພັດກາງເມືອງ ແລະ ຕີກັບຍັກທັດຖະຈັກຈົນໄດ້ຮັບໄຊຊະນະ.

**25) ທ້າວເກດສຸລິຍົງຍານເຂົ້າເມືອງພັນທະພານ**

ພາຍຫຼັງຕີກັບຍັກທັດຖະຈັກໄດ້ຮັບໄຊຊະນະແລ້ວ ທ້າວກໍໄດ້ເຂົ້າໄປພົບແມ່ ແລະ ເອົານາງປະທຸມມາ, ຍອດຟ້າມາເປັນເມຍ. ຈາກນັ້ນ ທ້າວກໍໄດ້ໃຫ້ຍັກສາລະວັນໄປນຳເອົາລຸງກຸມພາມາປົກຄອງເມືອງ ຍັກສາລະວັນໄດ້ມອບລູກສາວຊື່ນາງຈັນທອມໃຫ້ເປັນເມຍ, ຈາກນັ້ນ ຍັກສາລະວັນກໍກັບໄປປົກຄອງເມືອງຂອງຕົນ.

**26) ບັ້ນພະຍາອິນມາທົດສິງໃຫ້ທ້າວເກດສຸລິຍົງຍານນັ່ງເມືອງ**

ທ້າວ ເກດສຸລິຍົງຍານໄດ້ເອົາແມ່ (ນາງແຕງອ່ອນ) ໄປມອບໃຫ້ແກ່ພໍ່, ຈັກກີມະຫາວົງຄິດອາຍຕໍ່ເມຍ ແລະ ນາງແຕງອ່ອນເອງກໍຍັງຄຽດໃຫ້ຜົວ ແຕ່ຍ້ອນລູກນາງຈຶ່ງຄືນມາຫາຜົວອີກ ແລະ ພະຍາຈັກກີມະຫາວົງໄດ້ມອບເມືອງໃຫ້ເກດສຸລິຍົງຍານປົກຄອງຕໍ່. ທ້າວເກດສຸລິຍົງຍານໄດ້ເມຍ ແລະ ສູ່ຂໍໂດຍເຊີນເອົາພະຍາເມືອງຕ່າງໆ ແລະ ພະອິນມາຮ່ວມພິທີ. ບັນດາພະຍາເມືອງເມື່ອໄດ້ພົບລູກສາວທີ່ຍັກທັດຖະຈັກລັກໄປນັ້ນມາຢູ່ນຳທ້າວ ເກດສຸລິຍົງຍານກໍດີໃຈ ແລະ ພ້ອມທັງມອບລູກສາວໃຫ້ ແລະ ກໍສັ່ງສອນໄປພ້ອມ.

**27) ບັ້ນອິນພົມສັ່ງລາຄືນສູ່ເມືອງສະຫວັນ**

ເທບລີລາ, ເທບລີໄລ, ພະອິນ ແລະ ທ້າວອັດສະໄນໄດ້ອວຍພອນສິ່ງດີໆໃຫ້ທ້າວ ເກດສຸລິຍົງຍານ ແລະ ເມຍ , ທ້າວໄດ້ປົກຄອງເມືອງປະຊາລາຊະດອນກໍໄດ້ຢູ່ດີມີສຸກ.

ເມື່ອພະອິນຂຶ້ນສູ່ສະຫວັນແລ້ວ ບັນດາຍັກ ແລະ ພະຍາເມືອງຕ່າງໆກໍໄດ້ກັບຄືນສູ່ເມືອງຂອງໃຜລາວດ້ວຍຄວາມພູມໃຈ. ສ່ວນແມ່ໄວຍາກາກໍຖືກຂັງຄຸກ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ສະເໜີເລື່ອງ “ນາງແຕງອ່ອນ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

## ເອກະສານອ້າງອີງ

ກົມວັນນະຄະດີ. (1967). ນິທານນາງແຕງອ່ອນ ເຫຼັ້ມ 2.

ສົມທະເພີຍ ສີວົງສັກ ແລະ ອໍາໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈໍາວິຊາ



ປທ.ສົມທະເພີຍ ສີວົງສັກ